**ບົດຂ່າວ**

## ກອງປະຊຸມທົບທວນຜົນການດຳເນີນທຸລະກິດ ທົ່ວລະບົບ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ປະຈຳໄຕມາດ 01 ປີ 2018.




ໃນວັນທີ 25-26 ເມສາ 2018, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມທົບທວນຜົນການດຳເນີນທຸລະກິດປະຈຳໄຕມາດ 01/2018 ເຊິ່ງກອງປະຊຸມໄດ້ຈັດຂຶ້ນທີ່ຫ້ອງປະຊຸມໃຫຍ່ຊັ້ນ 5 ຕຶກ C ທຄຕລ , ພາຍໃຕ້ການເປັນປະທານ ຂອງ ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ແລະ ມີຜູ້ເຂົ້າຮ່ວມຂັ້ນ ຄະນະອຳນວຍການ, ຄະນະສາຂາ, ຄະນະພະແນກ, ຄະນະສູນ ແລະ ພະນັກງານທີ່ກ່ຽວຂ້ອງ ລວມທັງໝົດປະມານ 70 ທ່ານ.

ກອງປະຊຸມ ໄດ້ປະເມີນຜົນການດຳເນີນທຸລະກິດຂອງ ທຄຕລ ທົ່ວລະບົບ ໃນໄຕມາດ 1/2018 ແລະ ວາງທິດທາງການດຳເນີນງານ, ຄາດໝາຍແຜນການປະຕິບັດງານໃນໄຕມາດ 02/2018. ໃນກອງປະຊຸມຄັ້ງນີ້, ໄດ້ມີການຖອດຖອນບົດຮຽນ ເຊິ່ງກັນ ແລະ ກັນ ໂດຍເນັ້ນໜັກໃນວຽກງານການບໍລິຫານຄຸ້ມຄອງຄຸນນະພາບຂອງສິນເຊື່ອ, ການລະດົມທຶນ, ວຽກງານການຂະຫຍາຍຜະລິດຕະພັນການປັບປຸງການບໍລິການ, ຄວາມຄືບໜ້າໃນການປະຕິບັດບັນດາໂຄງການທີ່ຕິດພັນກັບແຜນຍຸດທະສາດໄລຍະຍາວ ແລະ ວຽກງານອື່ນໆທີ່ສຳຄັນ ເພື່ອໃຫ້ສາມາດບັນລຸແຜນການທີ່ວາງໄວ້.

ຈາກການລາຍງານເຫັນວ່າ ຜົນການດຳເນີນງານຂອງ ທຄຕລ ໃນໄລຍະໄຕມາດ 01 ປີ 2018 ນີ້ມີຫຼາຍດ້ານທີ່ຕັ້ງໜ້າ, ມີການພັດທະນາຫຼາຍຜະລິດຕະພັນທີ່ພົ້ນເດັ່ນອອກບໍລິການສັງຄົມ, ດ້ານຜົນການດຳເນີນທຸລະກິດມີກຳໄລບັນລຸແຜນການທີ່ກຳນົດໄວ້. ເຖິງຢ່າງໃດກໍ່ຕາມຄະນະປະທານກອງປະຊຸມ ກໍ່ໄດ້ມີທິດຊີ້ນຳບັນດາສາຂາເອົາໃຈໃສ່ວຽກງານຕ່າງໆ ເພື່ອເຮັດໃຫ້ ທຄຕລ ດຳເນີນທຸລະກິດມີກຳໄລ ເກີນແຜນການໃນທ້າຍປີ ແລະ ເພື່ອຮັບປະກັນຜົນປະໂຫຍດຂອງຜູ້ຖືຮຸ້ນ ທຄຕລ.

